ບໍລິສັດ AGL ປະກັນໄພລາວ
Assurances General Laos

# ເອກະສານຄັດຕິດ ສັນຍາປະກັນໄພລົດ

## ຂອງ ບໍລິສັດ ປະກັນໄພແຫ່ງປະເທດລາວ ຈຳກັດຜູ້ດຽວ (ຜູ້ປະກັນໄພ)

**ຂອບເຂດການຄຸ້ມກັນຂອງ ສັນຍາ ແມ່ນການົດໄວ້ໃນ ເງື່ອນໄຂທົ່ວໄປ ຂອງ ການປະກັນໄພລົດ.**

I. **ຂອບເຂດການຄຸ້ມກັນ:**

ສິນທົດແທນປະກັນໄພດັ່ງລຸ່ມນີ້ແມ່ນຄວາມຮັບຜິດຊອບສູງສຸດຂອງ ຜູ້ປະກັນໄພ. ການທົດແທນຄືນຈະໄດ້ປະຕິບັດກັບທຸກໆທາງເລືອກ ຊຶ່ງລາຍລະອຽດດັ່ງລຸ່ມນີ້:

1. **ການຄຸ້ມກັນຄວາມຮັບຜິດຊອບທາງແພ່ງຕໍ່ບຸກຄົນທີສາມ ການຄຸ້ມກັນໃນຂໍ້ "ກ ແລະ ຂ":**
ການຄຸ້ມກັນຄວາມຮັບຜິດຊອບທາງແພ່ງຕໍ່ບຸກຄົນທີສາມ ຈະຄຸ້ມກັນ ຄວາມເສຍຫາຍ ຕໍ່ ບຸກຄົນອື່ນ ເຊິ່ງລວມເຖິງ ຜູ້ໂດຍສານ ຂອງ ລົດປະກັນໄພ ຍົກເວັ້ນ ຜູ້ຂັບຂີ່ ແລະ ຊັບສິນ ຂອງ ຜູ້ໄດ້ຮັບການປະກັນໄພ. ຂອບເຂດການຄຸ້ມກັນແມ່ນຂຶ້ນກັບ ວົງເງິນປະກັນໄພ ທີ່ໄດ້ກຳນົດໄວ້ໃນ ສັນຍາປະກັນໄພ ເຊິ່ງເປັນຄວາມຮັບຜິດຊອບສູງສຸດທີ່ ຜູ້ປະກັນໄພສາມາດໃຫ້ການຄຸ້ມກັນ. ການຄຸ້ມກັນແມ່ນປະຕິບັດດັ່ງລຸ່ມນີ້:

1.1 ການທົດແທນຄວາມເສຍຫາຍ ຕາມ ຄວາມຮັບຜິດຊອບ ຂອງ ຜູ້ໄດ້ຮັບການປະກັນໄພ. ການຈ່າຍສິນທົດແທນປະກັນໄພ ສຳລັບຄວາມເສຍຫາຍທາງດ້ານຮ່າງກາຍ ແລະ ຄວາມເສຍຫາຍຕໍ່ຊັບສິນ ຈະຂຶ້ນກັບອັດຕາສ່ວນ ຂອງ ຄວາມຮັບຜິດຊອບ ແຕ່ບໍ່ເກີນວົງເງິນປະກັນໄພ. ກ່ຽວກັບກໍລະນີພິການຖາວອນບາງສ່ວນ, ຜູ້ປະກັນໄພ ຈະຄິດໄລ່ສິນທົດແທນປະກັນໄພ ຕາມອັດຕາສ່ວນຂອງການພິການ ທຽບໃສ່ການພິການຖາວອນທັງໝົດ.

1.2 ການຈ່າຍສິນທົດແທນປະກັນໄພ ພາຍໃຕ້ ຫຼັກການຄວາມຮັບຜິດຊອບໂດຍບໍ່ຖືຄວາມຜິດ, ຈຳກັດສະເພາະຄວາມເສຍຫາຍທາງດ້ານຮ່າງກາຍ ແລະ ໃນກໍລະນີທີ່ຍັງບໍ່ທັນຮູ້ວ່າໃຜເປັນຜູ້ຮັບຜິດຊອບຄວາມເສຍຫາຍ, ຜູ້ປະກັນໄພຈະຈ່າຍທົດແທນກ່ອນຕາມລະບຽບກົດໝາຍ ສູງສຸດ ຈຳນວນ 10,000,000 ກີບ ຕໍ່ ອຸປະຕິເຫດ 1 ຄັ້ງ ເຊິ່ງໃນນັ້ນ ຕໍ່ຜູ້ເຄາະຮ້າຍ 1 ຄົນ ກໍລະນີເສຍຊີວິດ ຫຼື ພິການຖາວອນທັງໝົດແມ່ນ 3,000,000 ກີບ ແລະ ສຳລັບຄ່າໃຊ້ຈ່າຍໃນການປິ່ນປົວຕາມຄວາມເສຍຫາຍຕົວຈິງ ແຕ່ບໍ່ເກີນ 1,800,000 ກີບ. ສຳລັບການພິການຖາວອນບາງສ່ວນແມ່ນຈະປະຕິບັດຕາມ ຂໍ້ 1.1 ຂ້າງເທິງນີ້.

| ທາງເລືອກ / ລາຍລະອຽດການຄຸ້ມກັນ | ວົງເງິນປະກັນໄພ (ກີບ) | | | | | |
|---|---|---|---|---|---|---|
| | ☐ ກຂ1 | ☐ ກຂ2 | ☐ ກຂ3 | ☐ ກຂ4 | ☐ ກຂ5 | **ຫຼັກການຄວາມຮັບຜິດຊອບທີ່ບໍ່ຖືຄວາມຜິດ |
| 1. ການຄຸ້ມກັນຄວາມຮັບຜິດຊອບທາງແພ່ງຕໍ່ບຸກຄົນທີສາມ ກຂ | | | | | | |
| 1.1 ***ຄວາມເສຍຫາຍທາງດ້ານຮ່າງກາຍ: | | | | | | |
| 1.1.1 ເສຍຊີວິດ ຫຼື ພິການຖາວອນທັງໝົດ, ສູງສຸດຕໍ່ຄົນ | 30,000,000 | 35,000,000 | 50,000,000 | 75,000,000 | 100,000,000 | 3,000,000 |
| 1.1.2 ຄ່າປິ່ນປົວ, ສູງສຸດຕໍ່ຄົນ | 4,000,000 | 4,500,000 | 5,000,000 | 7,500,000 | 10,000,000 | 1,800,000 |
| (ໃນນັ້ນຄ່ານອນໂຮງໝໍ ສູງສຸດຕໍ່ຄົນ) | 600,000 | 650,000 | 700,000 | 750,000 | 1,500,000 | 100,000 |
| ***ຄວາມເສຍຫາຍທາງດ້ານຮ່າງກາຍ, ສູງສຸດຕໍ່ອຸປະຕິເຫດ 1 ຄັ້ງ | 300,000,000 | 500,000,000 | 750,000,000 | 1,000,000,000 | 1,000,000,000 | 10,000,000 |
| 1.2 ຄວາມເສຍຫາຍທາງດ້ານວັດຖຸ, ສູງສຸດຕໍ່ອຸປະຕິເຫດ 1 ຄັ້ງ | 21,000,000 | 50,000,000 | 50,000,000 | 75,000,000 | 100,000,000 | 0 |

*** ຄວາມຮັບຜິດຊອບທີ່ບໍ່ຖືຄວາມຜິດແມ່ນນຳໃຊ້ໄດ້ກັບທຸກໆທາງເລືອກຂອງການຄຸ້ມກັນ ຂໍ້ ກ ແລະ ຂ.*

2. **ການຄຸ້ມກັນຜູ້ຂັບຂີ່ "ການຄຸ້ມກັນຂໍ້ ດ":**
ຜູ້ປະກັນໄພ ຄຸ້ມກັນບຸກຄົນທີ່ຂັບຂີ່ ລົດທີ່ໄດ້ຮັບການປະກັນໄພ ເຊິ່ງຜູ້ກ່ຽວໄດ້ຮັບອະນຸຍາດ ຈາກ ຜູ້ໄດ້ຮັບການປະກັນໄພ ເຊິ່ງເປັນບຸກຄົນທີ່ຈະບໍ່ ໄດ້ຮັບສິນທົດແທນປະກັນໄພ ຈາກ ການປະກັນໄພອື່ນໃດໜຶ່ງ ຫຼື ມີສິດໄດ້ຮັບແຕ່ວົງເງິນປະກັນໄພບໍ່ພຽງພໍ. ຜູ້ປະກັນໄພຈະຈ່າຍ ເງິນສິນທົດແທນປະກັນໄພ ສຳລັບ ສ່ວນທີ່ເກີນວົງເງິນຄຸ້ມຄອງເທົ່ານັ້ນ ແລະ ສູງສຸດເຖິງວົງເງິນຄຸ້ມກັນພາຍໃຕ້ ສັນຍາປະກັນໄພ.

**ມູນຄ່າຄຸ້ມກັນຄິດໄລ່ເປັນເງິນກີບ**

| ປະເພດລົດ | ລາຍລະອຽດຂອງການຄຸ້ມກັນ | ☐ ດ00 | ☐ ດ1 | ☐ ດ2 | ☐ ດ3 | ☐ ດ4 | ☐ ດ5 |
|---|---|---|---|---|---|---|---|
| ລົດ 4 ລໍ້ ຂຶ້ນໄປ | ເສຍຊີວິດ ຫຼື ພິການຖາວອນທັງໝົດ, ສູງສຸດຕໍ່ຄົນ | 15,000,000 | 30,000,000 | 35,000,000 | 50,000,000 | 75,000,000 | 100,000,000 |
| | ຄ່າປິ່ນປົວ, ສູງສຸດຕໍ່ຄົນ | 3,000,000 | 4,000,000 | 4,500,000 | 5,000,000 | 7,500,000 | 10,000,000 |
| ລົດ 2 ລໍ້ ແລະ 3 ລໍ້ (ລົດຈັກ ແລະ ລົດຕຸກໆ) | ເສຍຊີວິດ ຫຼື ພິການຖາວອນທັງໝົດ, ສູງສຸດຕໍ່ຄົນ | 7,500,000 | 15,000,000 | 17,500,000 | 25,000,000 | 37,500,000 | 50,000,000 |
| | ຄ່າປິ່ນປົວ, ສູງສຸດຕໍ່ຄົນ | 1,500,000 | 2,000,000 | 2,250,000 | 2,500,000 | 3,750,000 | 5,000,000 |

3. **ການປົກປ້ອງສິດ ແລະ ຮຽກຮ້ອງທົດແທນຄືນ "ການຄຸ້ມກັນ ຂໍ້ ຍ", ສູງສຸດຕໍ່ອຸປະຕິເຫດ 1 ຄັ້ງ, 150,000 ກີບ**
ພາຍໃນ ຂອບເຂດວົງເງິນປະກັນໄພສູງສຸດ ສຳລັບ ຄວາມເສຍຫາຍແຕ່ລະຢ່າງ ຕາມທີ່ໄດ້ກຳນົດໄວ້ໃນ ເງື່ອນໄຂຂອງສັນຍາປະກັນໄພ, ໃນກໍລະນີທີ່ ຜູ້ໄດ້ຮັບການປະກັນໄພ ຖືກຮ້ອງຟ້ອງ ໂດຍບຸກຄົນທີສາມ ເພື່ອຮຽກຮ້ອງໃຫ້ໃຊ້ແທນຄວາມເສຍຫາຍ ແລະ/ຫຼື ຄວາມສູນເສຍໃດໜຶ່ງ ອັນເປັນຜົນມາຈາກ ອຸປະຕິເຫດ, ຜູ້ປະກັນໄພ ຈະປົກປ້ອງສິດ ແລະ/ຫຼື ຜົນປະໂຫຍດ ຂອງ ຜູ້ໄດ້ຮັບການປະກັນໄພ. ໃນທາງກົງກັນຂ້າມ, ໃນກໍລະນີທີ່ ຜູ້ໄດ້ຮັບການປະກັນໄພ ຮ້ອງຟ້ອງ ບຸກຄົນທີສາມ ເພື່ອຮຽກຮ້ອງເອົາຄ່າເສຍຫາຍ ແລະ/ຫຼື ຄ່າສູນເສຍທີ່ເກີດຈາກອຸປະຕິເຫດ,

**ພາລະບົດບາດ ແລະ ໜ້າທີ່ ຂອງ ຜູ້ປະກັນໄພ :**
- ໃຫ້ຄຳແນະນຳທາງດ້ານເຕັກນິກ,
- ຊ່ວຍໃນການກະກຽມເອກະສານຕ່າງໆ,
- ຊ່ວຍຕິດຕາມຄະດີ ສຳລັບ ຜູ້ໄດ້ຮັບການປະກັນໄພ ເທົ່ານັ້ນ.

**ພາລະບົດບາດ ແລະ ໜ້າທີ່ ຂອງ ຜູ້ໄດ້ຮັບການປະກັນໄພ:**
- ສະໜອງຂໍ້ມູນ ແກ່ ເຈົ້າໜ້າທີ່ຕຳຫຼວດ ດ້ວຍຕົນເອງ;
- ສະໜອງຂໍ້ມູນຫຼັກຖານ ແກ່ ຕຳຫຼວດ / ສານ,
- ໃຫ້ຄຳໃຫ້ການ ຫຼື ຄຳໂຕ້ແຍ້ງ,
- ເຂົ້າຮ່ວມການປະຊຸມ ຕາມການສະເໜີ,
- ເຂົ້າຮ່ວມຟັງຄຳຕັດສິນ ແລະ ອື່ນໆ...

**ກໍລະນີຍົກເລີກສັນຍາ**, ຕ້ອງສົ່ງຄືນໃບຢັ້ງຢືນ ແລະ ສັນຍາປະກັນໄພລົດ, ຄ່າທຳນຽມປະກັນໄພທີ່ຈະສົ່ງຄືນດັ່ງນີ້ (ສະເພາະສັນຍາທີ່ບໍ່ເກີດອຸປະຕິເຫດເທົ່ານັ້ນ):

| ຈຳນວນມື້ທີ່ໃຊ້ແລ້ວ | ≤ 30 | 31-60 | 61-90 | 91-120 | 121-150 | 151-180 | 181-210 | 211-240 | 241-270 | 271-300 | 301-330 | 331-365 |
|---|---|---|---|---|---|---|---|---|---|---|---|---|
| % ທຽບໃສ່ຄ່າທຳນຽມປີ | 72 | 66 | 60 | 52 | 44 | 32 | 27 | 22 | 15 | 12 | 5 | 0 |

## II. ຂໍ້ຄວນລະວັງ

1. ຄວາມເສຍຫາຍທີ່ເກີດຈາກຜູ້ຂັບຂີ່ ທີ່ບໍ່ມີໃບຂັບຂີ່ຖືກຕ້ອງຕາມປະເພດລົດ ຫຼື ໃນຂະນະມຶນເມົາ, ບໍ່ວ່າຈະເກີດຈາກລົດຢາເສບຕິດ, ສານເຄມີທີ່ມີລິດຕໍ່ປະສາດ, ການບໍລິໂພກເຄື່ອງດື່ມທີ່ມີທາດເຫຼົ້າ ທຽບເທົ່າ ຫຼື ເກີນກວ່າ 0.24mg/l ໃນລົມຫາຍໃຈ ຕາມ ກົດໝາຍວ່າດ້ວຍການຈະລາຈອນທາງບົກ ຂອງ ສປປ ລາວ.
2. ຄວາມຮັບຜິດຊອບທາງແພ່ງຕໍ່ບຸກຄົນທີສາມຂໍ້ ກ ແລະ ຂ ຄຸ້ມກັນຄວາມເສຍຫາຍຕໍ່ບຸກຄົນອື່ນ ລວມທັງຜູ້ໂດຍສານໃນລົດທີ່ມີປະກັນໄພ ຍົກເວັ້ນຜູ້ຂັບຂີ່ ແລະ ຄວາມເສັຍຫາຍທີ່ເປັນກຳມະສິດຂອງ ຜູ້ໄດ້ຮັບການປະກັນໄພ.
3. ຄວາມຮັບຜິດຊອບທາງແພ່ງຕໍ່ບຸກຄົນທີສາມ ບໍ່ຄຸ້ມກັນຄວາມເສຍຫາຍຕໍ່ວັດຖຸຊັບສິນທີ່ເກີດຈາກການສັ່ນສະເທືອນ ຫຼື ຈາກການກົດທັບຂອງລົດທີ່ໄດ້ຮັບການປະກັນໄພຕໍ່ກັບເຄື່ອງຊັ່ງນໍ້າໜັກ, ຖະໜົນຫົນທາງ, ຂົວ, ທາງຄົນຍ່າງ, ເດີ່ນສາທາລະນະ ຫຼື ສ່ວນບຸກຄົນ ລວມທັງຄວາມເສຍຫາຍທີ່ເກີດກັບສິ່ງອື່ນໆທີ່ຢູ່ລຸ່ມສິ່ງດັ່ງກ່າວ.
4. ອີງຕາມດຳລັດແລະກົດໝາຍ,ການຄຸ້ມກັນຄວາມຮັບຜິດຊອບທາງແພ່ງຕໍ່ບຸກຄົນທີສາມບໍ່ຄຸ້ມກັນຄວາມເສຍຫາຍຕໍ່ວັດຖຸຊັບສິນທີ່ເກີດຈາກຄວາມສູງເກີນກຳນົດຂອງລົດ ແລະ ເຄື່ອງທີ່ບັນທຸກ ຕໍ່ສາຍໄຟ, ສາຍໂທລະສັບ, ສາຍໂທລະໂຄ່ງ, ສາຍໂທລະພາບ ຫຼື ອື່ນໆ ລວມທັງຄວາມເສຍຫາຍທີ່ເກີດຂຶ້ນກັບວັດຖຸສິ່ງຂອງທີ່ກ່ຽວຂ້ອງກັບສິ່ງດັ່ງກ່າວຕາມກົດໝາຍ ແລະ ດຳລັດທີ່ໄດ້ກຳນົດໄວ້. ໂດຍສະເພາະແມ່ນມາດຕາ 34 ດຳລັດ ເລກທີ188 ລົງວັນທີ 3/7/2007.
5. ສັນຍາສະບັບນີ້ໃຫ້ການຄຸ້ມກັນອຸປະຕິເຫດຈາກການສັນຈອນໃນທ້ອງຖະໜົນເທົ່ານັ້ນ ແລະ ຈະບໍ່ໃຫ້ການຄຸ້ມກັນຄວາມເສຍຫາຍທີ່ເກີດຈາກການນຳໃຊ້ພາຫະນະທີ່ໄດ້ຮັບການປະກັນໄພເພື່ອເປັນກົນຈັກຮັບໃຊ້ໃນວຽກງານກໍ່ສ້າງ ຫຼື ການທຳການຜະລິດ ຫຼື ຄວາມເສຍຫາຍທີ່ເກີດຈາກການເຈດຕະນາກະທຳ.
6. ສຳລັບລົດຈັກ, ກໍລະນີຜູ້ໄດ້ຮັບການປະກັນໄພຫາກຊື້ປະກັນໄພຜູ້ຂັບຂີ່ ແລະ ຜູ້ໂດຍສານ, ຄົນຂັບລົດ ແລະ ຜູ້ຊ້ອນທ້າຍ ຕ້ອງໃສ່ໝວກກັນກະທົບ ສັນຍາຂໍ້ ດ ຈຶ່ງຈະໄດ້ຮັບການຄຸ້ມກັນ.
7. ສັນຍາສະບັບນີ້ ບໍ່ຄຸ້ມກັນຄວາມເສຍຫາຍ ຫຼື ໄຟໄໝ້ທີ່ເກີດຈາກການລັກຊັບສິນ, ການຍັກຍອກສໍ້ໂກງໂດຍບຸກຄົນທີ່ໄດ້ຮັບມອບໝາຍ ຫຼື ຄອບຄອງລົດຕາມສັນຍາເຊົ່າ, ສັນຍາຊື້-ຂາຍຈາຍຜ່ອນ, ສັນຍາຊວດຈຳ ຫຼື ໂດຍບຸກຄົນທີ່ມີສ່ວນພົວພັນໃນສັນຍາດັ່ງກ່າວ.
8. ທຸກຄວາມເສຍຫາຍທີ່ເກີດຈາກການກໍ່ການຮ້າຍ, ອາຊະຍາກຳ ຫຼື ເຫດສຸດວິໄສ ຈະບໍ່ໄດ້ຮັບການຄຸ້ມກັນ.
9. ກໍລະນີລົດຖືກຂາຍ ຫຼື ໂອນກຳມະສິດ, ສັນຍາປະກັນໄພຈະສິ້ນສຸດລົງໂດຍອັດຕະໂນມັດ. ດັ່ງນັ້ນເຈົ້າຂອງລົດຜູ້ໃໝ່ຕ້ອງໄດ້ຊື້ປະກັນໄພໃໝ່ຈຶ່ງຈະຖືກຄຸ້ມກັນ.
10. ກໍລະນີເກີດອຸປະຕິເຫດ ຜູ້ໄດ້ຮັບການປະກັນໄພຕ້ອງແຈ້ງ ຜູ້ປະກັນໄພ ທັນທີ ໂທ: 1456; (021) 222 222; 020 5524 4222.
11. ຜູ້ປະກັນໄພ ຈະບໍ່ຮັບຮູ້ຕໍ່ຄວາມຮັບຜິດຊອບ ແລະ/ຫຼື ການຕົກລົງໃດໆ ທີ່ບໍ່ໄດ້ຮັບການເຫັນດີຈາກ ຜູ້ປະກັນໄພ ກ່ອນ.
12. ຜູ້ໄດ້ຮັບການປະກັນໄພ ແລະ ຜູ້ທີ່ກ່ຽວຂອງໃນສັນຍານີ້ມີພັນທະໃນການສະໜອງຂໍ້ມູນຢ່າງຄົບຖວນແລະຖືກຕ້ອງໃຫ້ກັບ ຜູ້ປະກັນໄພ ແລະ ເຫັນດີໃຫ້ ຜູ້ປະກັນໄພ ເຂົ້າເຖິງ, ເກັບກຳ, ຮຽກເອົາ, ນຳໃຊ້ຂໍ້ມູນຈາກຜູ້ກ່ຽວ ແລະ ພາກສ່ວນທີ່ກ່ຽວຂ້ອງ.